# ປະກາດແຈ້ງການ

**(ແຈ້ງການລ່ວງໜ້າກ່ຽວກັບທຶນເງິນກູ້ຈາກກອງທຶນ LAFF)**

ທະນາຄານ ແຫ່ງ ສປປ ລາວ (ທຫລ) ມີຄວາມຍິນດີແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ກ່ຽວກັບ ການສົ່ງໜັງສືສະແດງເຈດຈຳນົງ (EOI) ໃນການສະເໜີຂໍກູ້ຢືມຈາກ "ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ" (LAFF) ເຊິ່ງເປັນກອງທຶນທີ່ໄດ້ຮັບທຶນສະໜັບສະໜູນຈາກລັດຖະບານຂອງປະເທດເຢຍລະມັນ ໂດຍຜ່ານທະນາຄານເພື່ອການພັດທະນາຂອງປະເທດເຢຍລະມັນ KfW, ເຊິ່ງຈະໄດ້ມີການອອກປະກາດຢ່າງເປັນທາງການ ໃນມື້ວັນທີ **19 ກຸມພາ 2021.**

ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ (ຫຼື LAFF) ແມ່ນສ້າງຕັ້ງຂຶ້ນໃນປີ 2014, ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກ ກະຊວງ ຮ່ວມມື ແລະ ການພັດທະນາດ້ານເສດຖະກິດ (BMZ) ຂອງປະເທດເຢຍລະມັນ ໂດຍຜ່ານ ທະນາຄານພັດທະນາ ຂອງ ປະເທດເຢຍລະມັນ ຫຼື KfW. ເປົ້າໝາຍຂອງກອງທຶນດັ່ງກ່າວແມ່ນເພື່ອແນ່ໃສ່ການສົ່ງເສີມການເຂົ້າເຖິງແຫຼ່ງທຶນສໍາລັບ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນເຂດຊົນນະບົດ ຂອງ ສປປ ລາວ, ຊຶ່ງທຶນເບື້ອງຕົ້ນແມ່ນ 3 ລ້ານຢູໂຣ. ຜ່ານມາ ກອງທຶນ LAFF ໄດ້ໃຫ້ການປ່ອຍກູ້ໃຫ້ແກ່ ທະນາຄານທຸລະກິດ ແລະ ສກຈຮ ເພື່ອນໍາໄປປ່ອຍກູ້ຕໍ່ໃຫ້ແກ່ MSMEs ຫຼາຍກ່ວາ 2,400 ຫົວ ໜ່ວຍ, ໃນນັ້ນ ມີຫຼາຍຫົວໜ່ວຍ MSMEs ແມ່ນຖືວ່າເປັນການເຂົ້າເຖິງແຫຼ່ງທຶນຄັ້ງທໍາອິດ ຂອງເຂົາເຈົ້າຈາກກອງທຶນດັ່ງກ່າວ.

ຈາກຜົນສໍາເລັດຂອງໂຄງການ LAFF ໄລຍະ I, ລັດຖະບານຂອງປະເທດເຢຍລະມັນ ຈຶ່ງສືບຕໍ່ໃຫ້ທຶນ ສະໜັບສະໜູນເພີ່ມຕື່ມອີກ 6 ລ້ານຢູໂຣ ແລະ ອີກ 0.8 ລ້ານຢູໂຣເປັນທຶນຊ່ວຍເຫຼືອດ້ານ ວິຊາການໃຫ້ແກ່ ໂຄງການ LAFF ໄລຍະ II, ຊຶ່ງໄດ້ເລີ່ມມາແຕ່ວັນທີ 02 ມີນາ 2020.

ລາຍລະອຽດເພີ່ມຕື່ມ ກ່ຽວກັບ ການສະເໜີເຈດຈໍານົງ (EOI) ແມ່ນປະກາດຢູ່ເວບໄຊຂອງ ທຫລ (www.bol.gov.la) ແລະ ເວບໄຊ ຂອງ ໂຄງການ LAFF (www.laff.org) ໃນມື້ວັນທີ **19 ກຸມພາ 2021**, ຊຶ່ງເນື້ອໃນລາຍລະອຽດຈະມີ: ເງື່ອນໄຂໃນການກູ້ຢືມ, ເງື່ອນໄຂຂອງຜູ້ທີ່ຈະສາມາດກູ້ຢືມໄດ້, ແບບຟອມສະໝັກ ແລະ ເອກະສານຕ່າງໆທີ່ຈະໄດ້ປະກອບໃສ່ໃນເອກະສານກູ້ຢືມ. ທາງໂຄງການຈະໄດ້ຈັດເວທີອະທິບາຍ ກ່ຽວກັບການສະໝັກຢູ່ນະຄອນຫຼວງວຽງຈັນ ໃນວັນທີ **23 ກຸມພາ 2021** ໃນເວລາ **9 ໂມງ ຕອນເຊົ້າ** ທີ່ ຫ້ອງປະຊຸມຊັ້ນ4 ທຫລ ໂດຍການເປັນປະທານຂອງ **ທ່ານ ຄໍາແກ້ວ ວິສີສົມບັດ ວ່າການຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ທັງເປັນຜູ້ອໍານວຍການກອງທຶນ LAFF.**

ແລະ ຈະເປີດໃຫ້ສອບຖາມຜ່ານທາງ ອອນໄລ (online) ວັນທີ **25 ກຸມພາ 2021**, ຜູ້ທີ່ສົນໃຈສະເໜີຂໍທຶນສາມາດສົ່ງຄຳຖາມ ຫຼື ຂໍ້ຂ້ອງໃຈເພື່ອໃຫ້ໂຄງການ ອະທິບາຍເພີ່ມຕື່ມ ໄປໃຫ້ໂຄງການ ກ່ອນວັນທີ 01 ມີນາ 2021, ທາງໂຄງການຈະໃຫ້ການອະທິບາຍ ແລະ ຕອບຂໍ້ຂ້ອງໃຈຕ່າງໆ ພາຍໃນ 1 ອາທິດພາຍຫຼັງໄດ້ຮັບຄຳຖາມ ຫຼື ຂໍ້ຂ້ອງໃຈຕ່າງໆ.

ວັນກຳນົດສົ່ງໜັງສືສະແດງເຈດຈຳນົງ ສຳລັບ ທະນາຄານທຸລະກິດ ແລະ ສກຈຮ (ພາກສ່ວນອື່ນໆແມ່ນບໍ່ສາມາດສະເໜີຂໍທຶນໄດ້) ແມ່ນ **ວັນທີ 22 ມີນາ 2021.** ຫຼັງຈາກນັ້ນ ໂຄງການ LAFF ຈະທົບທວນໃບສະເໜີຂໍທຶນ ແລະ ລົງໄປປະເມີນຄວາມພ້ອມ (Due diligence) ເພື່ອທຳການປະເມີນຄວາມສາມາດໃນການກູ້ຢືມຂອງແຕ່ລະສະຖາບັນການເງິນທີ່ສະເໜີຂໍທຶນ. ຈາກນັ້ນ ທາງໂຄງການ ຈະຕົກລົງອະນຸມັດການປ່ອຍທຶນເງິນກູ້ພາຍໃນ **ທ້າຍເດືອນ ເມສາ 2021** ແລະ ຈະເລີ່ມເບີກຈ່າຍທຶນເງິນກູ້ໃນ **ເດືອນ ພຶດສະພາ 2021.**

ການສະໜັບສະໜູນຜູ້ປະກອບການ MSME ແມ່ນນະໂຍບາຍບູລິມະສິດຂອງລັດຖະບານ ແຫ່ງ ສປປ ລາວ, ເນື່ອງຈາກ MSME ໄດ້ປະກອບສ່ວນອັນສຳຄັນໃນການສ້າງວຽກເຮັດງານທຳ ແລະ ສ້າງ ລາຍຮັບໃຫ້ແກ່ປະຊາຊົນລາວ. ການຍົກລະດັບການບໍລິການໃນການເຂົ້າເຖິງແຫຼ່ງທຶນໄລຍະຍາວ ທີ່ເປັນສະກຸນເງິນກີບ ໃຫ້ແກ່ MSME ຈະເຮັດໃຫ້ເຂົາເຈົ້າສາມາດນຳໄປລົງທຶນເພື່ອຂະຫຍາຍກິດຈະການຂອງຕົນ ແລະ ປະກອບສ່ວນໃຫ້ແກ່ການຂະຫຍາຍຕົວທາງເສດຖະກິດຢ່າງມີຄວາມສະເໝີພາບໃນ ສປປ ລາວ.

<u>ລາຍລະອຽດເພີ່ມຕື່ມ ກະລຸນາຕິດຕໍ່:</u>

ທ່ານ ແກ້ວລັບທະວົງ ສິງສະໄໝວົງ, ທີມງານທີ່ປຶກສາປະຈຳກອງທຶນ LAFF, ໂທ: 020 99389966

ທ່ານ ນ. ສ້ອຍສຸວັນ ສີບໍລິບູນ, ພະແນກສິນເຊື່ອ ທຫລ, ໂທ: 021 262672, 020 22440559